# LIWG Weekly News Update
# ສັງລວມຂ່າວປະຈຳອາທິດ

**LIWG Weekly News Update**
**ສັງລວມຂ່າວປະຈຳອາທິດ ໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ**

**February 26 – 2 March, 2018**
**ວັນທີ 26 ກຸມພາ - 2 ມີນາ 2018**



**Agreement Reached On Compensation of Railway Project Affected Families**: KPL
*Photo by KPL: Chinese - Lao Railway Construction*


ນັກລົງທຶນຈີນ ໃນໂຄງການນ້ຳອູ 3 ຈະສ້າງເຮືອນ ໃຫ້ແກ່ 311 ຄອບຄົວ : ລາວໂພສ
*ຮູບພາບຈາກລາວໂພສ: ການກໍ່ສ້າງເຂື່ອນນ້ຳອູ3*

## English news

**Vientiane-Pakxe Expressway feasibility study is underway: Vientiane Times**
***26/2/2018***
The 585 km-expressway from Vientiane to Champassak Province is set to comprise four 3.5 metre wide lanes with a total carriageway width of 23 metres.
The government highlighted the construction of the expressway will help the nation to connect with the region with the aim of turning the land-locked country into a hub of connection.
The road will be built based on Asean expressway standard grade 1 and be capable of accommodating loads of up to 11 tonnes per axle.
The construction of the new expressway will follow the route of National Road No. 13 South.

**Agreement Reached On Compensation of Railway Project Affected Families: KPL**
***26/2/2018***
Laos-China Railway Project and relevant authorities have reached agreement on the compensation of families affected by the multibillion-dollar project and asked the families to open account with Banque Pour Le Commerce Exterieur Lao to receive the compensations.
The payment will be transfered to bank account of Banque pour le Commerce Exterieur Lao with a copy of notice sent to provincial governors for acknowledgement. Vice governors, as a supervisor of the project, will approve the payment

Priority of the compensation will be farmers whose crops damaged and those with residential properties surrendered to the government.
*Also read at Railway compensation gathers steam: Vientiane Times.*

**Economists highlight opportunities, shortcomings of SEZs: Vientiane Times**
***27/2/2018***
Economists have noted that the establishment of special economic zones (SEZ) by the government has offered both opportunities and challenges for the country's economic development.
Dr Mana recommended that the government prioritise the establishment of SEZs, noting that Laos had created too many.
The report by the Ministry of Planning and Investment showed that the 12 specific and special economic zones have attracted 350 Lao and overseas companies with total registered capital of US$8 billion.

**Ministry slow to tackle land-related issues: Vientiane Times**
***1/3/2018***
More than 30 incidents of public concern in relation to natural resources and the environment have yet to be addressed.
The ministry received 44 complaints from members of the public in the past one or more years, of which 36 concerned land issues. The complaints were mainly related to compensation for land lost to concession projects, and land price estimates.
Land issues topped concerns raised by members of the public to the National Assembly and have been debated by Assembly members for many years.
Loopholes in the Land Law have caused disputes concerning compensation and huge losses to state revenue arising from irregular land deals.
To speed up its work, the ministry has introduced the slogan **"Doing Best, Doing Fast, and Doing More under the Law".**

**Govt, INGOs look to more productive cooperation: Vientiane Times**
***1/3/2018***
The 3rd National Conference on the Review of the Cooperation between the Government of Laos and INGOs took place at the National Convention Centre.
The meeting reviewed fields of cooperation since 2015, and assessed the successes and challenges encountered, as well as future cooperation between the government and INGOs.
In the future, continued improvement of coordination between government, local authorities and INGOs was needed to better manage and implement these projects, Mr Thongphane said. Continuing support for local authorities and residents was also required to jointly implement activities and projects.
Mr Saleumxay said "INGOs and civil society organisations are important for the development of our country and the work they do to reduce poverty by partnering with the government to carry out development plans and fulfil the Sustainable Development Goals.

**Read more interested news of the week:**

Second Lao Governor Dismissed Over Illegal Logging Claims: **RFA**
Cambodia, Laos losing the last of their trees: **Asia Times**
Progress on Savannakhet Road No. 9 bridges approaching halfway: **Vientiane Times**
EPF supports protection of forests, wildlife habitats in seven provinces: **Vientiane Times**

## ຂ່າວພາສາລາວ

[ລມຕ ກະຊວງພະລັງງານຊີ້ ມີການສຶກສາ, ສຳຫຼວດສ້າງເຂື່ອນ 400 ກວ່າໂຄງການ]: ຂ່າວໂດຍ ເສດຖະກິດການຄ້າ

*ວັນທີ 28 ກຸມພາ 2018*

ປັດຈຸບັນໄດ້ມີການສຶກສາ ສຳຫຼວດ ແຫຼ່ງຜະລິດພະລັງງານແລ້ວ ມີເຖິງ 443 ໂຄງການ ໃນຂອບເຂດທົ່ວປະເທດ ເຊິ່ງມີກຳລັງຕິດຕັ້ງຫຼາຍກວ່າ 30,000 ເມກາວັດ. ໃນນີ້ປະກອບມີ: ພະລັງງານແສງຕາເວັນ, ພະລັງງານລົມ, ຖ່ານຫີນ, ໄບໂອເມັສ. ພິເສດສະເພາະຊັບພະຍາກອນແຫຼ່ງນ້ຳທຳມະຊາດ ຍັງຈະສາມາດຜະລິດພະລັງງານໄຟຟ້າໄດ້ປະມານ 26,000 ກວ່າເມກາວັດ ຫຼື ຫຼາຍກວ່າ 200 ເຂື່ອນ. ປັດຈຸບັນ ທົ່ວປະເທດມີແຫຼ່ງຜະລິດພະລັງງານໄຟຟ້າທັງໝົດ 48 ແຫ່ງ ມີກຳລັງຕິດຕັ້ງທັງໝົດ 6,551 ເມກາວັດ. ນອກນີ້ ຍັງມີໂຄງການທີ່ພວມລົງມືກໍ່ສ້າງ ແລະ ກຳລັງຈະລົງມືກໍ່ສ້າງທັງໝົດໃນທົ່ວປະເທດ ຈຳນວນ 52 ແຫ່ງ ເຊິ່ງຄາດຄະເນວ່າຈະສຳເລັດທັງໝົດຮອດປີ 2020 – 2021 ແລະ ໃນເວລານັ້ນ ສປປ ລາວ ຈະມີແຫຼ່ງພະລັງງານໄຟຟ້າ 100 ແຫ່ງ ເຊິ່ງໃນນີ້ ປະມານ 85% ຈະສົ່ງອອກຈຳໜ່າຍຢູ່ຕ່າງປະເທດ.

[ທາງການພ້ອມຈະຈ່າຍ ຄ່າຊົດເຊີຍ ທາງຣົດໄຟ]: ຂ່າວໂດຍ ວິທະຍຸ ເອເຊຍເສຣີ

*ວັນທີ 28 ກຸມພາ 2018*

ທາງການລາວ ໄດ້ຈັດກອງປະຊຸມປຶກສາຫາລື ດ້ານວິຊາການ ກ່ຽວກັບການຊຳລະ ແລະຊົດເຊີຍສິ່ງກີດຂວາງ ຂອງປະຊາຊົນ ຜູ້ທີ່ໄດ້ຮັບຜົລກະທົບ ຈາກໂຄງການກໍ່ສ້າງ ທາງຣົດໄຟ ລາວ-ຈີນ ທີ່ໄດ້ຈັດຂຶ້ນ ໃນວັນທີ 22 ເດືອນ ກຸມພາ ປີ 2018, ທີ່ແຂວງຫລວງພຣະບາງ ພ້ອມຢືນຢັນວ່າ ຈະຊົດເຊີຍຄ່າເສັຽຫາຍ ທັງທີ່ເປັນທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ແກ່ຜູ້ທີ່ໄດ້ຮັບ ຜົລກະທົບ ຈາກໂຄງການ ດັ່ງກ່າວ ຕາມ 5 ລຳດັບ ບູຣິມະສິດ.

ເມື່ອຕົ້ນເດືອນກຸມພາ ທີ່ຜ່ານມາ, ທ່ານ ບໍທອງ ໂງ່ນພະຈັນ, ຮອງຣັຖມົນຕຣີ ກະຊວງໂຍທາທິການ ແລະຂົນສົ່ງ ທັງເປັນຄນະຄຸ້ມຄອງໂຄງການກໍ່ສ້າງທາງຣົດໄຟ ລາວ-ຈີນ ໄດ້ກ່າວຍອມຮັບຕໍ່ກອງປະຊຸມ “ນິ່ງແລວທາງ ນິ່ງເສັ້ນທາງ” ທີ່ຈັດຂຶ້ນໃນ ນະຄອນຫຼວງວຽງຈັນ ວ່າ ການຊົດເຊີຍ ໃຫ້ຜູ້ທີ່ໄດ້ຮັບ ຜົລກະທົບ ຈາກໂຄງການກໍ່ສ້າງ ທາງຣົດໄຟ ລາວ-ຈີນ ແມ່ນຍັງມີການຊັກຊ້າແກ່ຍາວ ຍ້ອນຕ້ອງໄດ້ເຮັດໃຫ້ຖືກຕ້ອງ ຕາມຣະບຽບກົດໝາຍ ແລະ ເປັນທີ່ເພິ່ງພໍໃຈ ຂອງປະຊາຊົນ.

[ນັກລົງທຶນຈີນ ໃນໂຄງການນ້ຳອູ 3 ຈະສ້າງເຮືອນ ໃຫ້ແກ່ 311 ຄອບຄົວ]: ລາວໂພສ

*ວັນທີ 1 ມີນາ 2018*

ກຸ່ມບໍລິສັດ Power China ຈຳກັດຈາກຈີນຜູ້ລົງທຶນໃນໂຄງການດັ່ງກ່າວນີ້ກໍ່ໄດ້ໃຫ້ການຢືນຢັນວ່າ ການກໍ່ສ້າງບ້ານຈັດສັນໃໝ່ ໃຫ້ກັບປະຊາຊົນລາວຈນວນທັງໝົດ 311 ຄອບຄົວຈາກ 13 ບ້ານໃນເມືອງຂວາ ກັບ 1 ບ້ານໃນເມືອງໃໝ່ແຂວງຜົ້ງສາລີ ແລະ 4 ບ້ານໃນເຂດເມືອງ ງອຍ ແຂວງ ຫຼວງພະບາງນັ້ນ ຈະແລ້ວສຳເລັດໃນປີ 2019.

ປະຊາຊົນລາວ 2,000 ກວ່າ ຄົວເຮືອນ ຫຼື 10,000 ກວ່າຄົນ ໃນ 28 ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນນ້ຳອູ ທັງ 7 ໂຄງການຊຶ່ງຜ່ານມາກໍມີລາຍງານວ່າກຸ່ມຜູ້ລົງທຶນໃນໂຄງການໄດ້ຈ່າຍເງິນຊົດເຊີຍຄ່າທີ່ດິນ ແລະ ສິ່ງປູກສ້າງໃຫ້ກັບປະຊາຊົນລາວທີ່ຖືກກະທົບຈາກໂຄງການເຂື່ອນນ້ຳອູ 2, 5 ແລະ 6 ໄປແລ້ວ ແຕ່ວ່າຈາກການສຳຫຼວດແລະເກັບກຳຂໍ້ມູນໂດຍອົງການແມ່ນ້ຳສາກົນ (International River) ພົບວ່າຈະມີປະຊາຊົນລາວໃນ 89 ບ້ານທັງໃນແຂວງຜົ້ງສາລີ ແລະແຂວງອຸດົມໄຊ ແລະ ແຂວງ ຫຼວງພະບາງ ທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນນ້ຳອູ ຊຶ່ງສ່ວນໃຫຍ່ຍັງບໍ່ທັນໄດ້ຮັບການຊົດເຊີຍແຕ່ຢ່າງໃດ.

[ໂຄງການເຂື່ອນຂນາດນ້ອຍ ຂ.ເຊກອງ]: ຂ່າວໂດຍ ວິທະຍຸ ເອເຊຍເສຣີ

*ວັນທີ 1 ມີນາ 2018*

ກະຊວງຍັງບໍ່ໄດ້ຮັບຣາຍງານ ວ່າຈະມີການກໍ່ສ້າງເຂື່ອນໄຟຟ້າ ທັງ 3 ແຕ່ກົດໝາຍວ່າດ້ວຍໄຟຟ້າ ສະບັບປັບປຸງ ປີ 2017 ການເຊັນອະນຸມັດ ສ້າງເຂື່ອນໄຟຟ້າຂນາດນ້ອຍ 5 ເມກາວັດ ຂຶ້ນໄປຜູ້ຮັບຜິດຊອບ ແລະອະນຸມັດໂຄງການ ຈະຕ້ອງມີເຈົ້າໜ້າທີ່ ຂັ້ນສູນກາງກະຊວງແຜນການແລະການລົງທຶນ ກະຊວງພລັງງານແລະບໍ່ແຮ່ ເປັນຜູ້ຮັບຮອງເອກສານ ຮວມເຖິງການກວດກາ ມາຕຖານ ໃນການກໍ່ສ້າງເຂື່ອນໄຟຟ້າ ນຳດ້ວຍ.

ເນື່ອງຈາກໄລຍະຜ່ານມາ ການກໍ່ສ້າງເຂື່ອນໄຟຟ້າ ຂານາດນ້ອຍຕາມກົດໝາຍ ວ່າດ້ວຍໄຟຟ້າ  ສະບັບເກົ່ານັ້ນ ເຂື່ອນໄຟຟ້າ ຂນາດຕໍ່າກວ່າ 15 ເມກາວັດ ເຈົ້າໜ້າທີ່ແຂວງ ສາມາດອະນຸມັດກໍ່ສ້າງໄດ້ ຊຶ່ງຈະບໍ່ເປັນໄປຕາມ ມາຕຖານຂອງສູນກາງ ກໍານົດ ເປັນຕົ້ນ ກໍຣະນີເຂື່ອນນໍ້າເອົ້າ ໃນແຂວງຊຽງຂວາງ ທີ່ແຕກເມື່ອ ເດືອນ ກັນຍາ ປີ 2017 ຜ່ານມາ ຊຶ່ງເຮັດໃຫ້ຣັຖ ເສັຽຫາຍ ຢ່າງຫຼວງຫຼາຍ ອີກທັງປະຊາຊົນຫຼາຍຄອບຄົວ ກໍຖືກຜົນກະທົບໜັກ ເຊັ່ນດຽວກັນ.

**<u>ອ່ານຂ່າວເດັ່ນປະຈໍາອາທິດເພີ່ມເຕີມ</u>:**

<u>ໂຄງການທາງລົດໄຟລາວ-ຈີນ ມີຄວາມພ້ອມ ຈ່າຍຄ່າຊົດເຊີຍຜູ້ໄດ້ຮັບຜົນກະທົບ</u>: **ຂ່າວໂດຍ ຈໍາປາໂພສ**

<u>ເຜີຍແຜ່ຜົນກອງປະຊຸມວ່າດ້ວຍການຮ່ວມມືສາກົນ “ໜຶ່ງແລວ ໜຶ່ງເສັ້ນທາງ”</u>: **ຂ່າວໂດຍ ເສດຖະກິດ-ສັງຄົມ**

<u>ປີທີ່ຜ່ານມາ ບໍລິສັດ ການລົງທຶນຢາງພາລາ ຢຸນນານ ສົ່ງອອກຢາງ 30 ພັນກວ່າໂຕນ</u>: **ຂ່າວໂດຍ ເສດຖະກິດການຄ້າ**

<u>ແຂວງວຽງຈັນ ອອກມາຊີ້ແຈງ ການພັດທະນາສະໜາມບິນເກົ່າ ເມືອງວັງວຽງ ບໍ່ມີຄາຊີໂນໃນແຜນດັ່ງທີ່ເປັນຂ່າວກ່ອນໜ້ານັ້ນ</u>: **ຂ່າວໂດຍ ລາວອັບເດດ**

<u>ເຈົ້າໜ້າທີ່ທໍາລາຍສວນຝິ່ນຂອງປະຊາຊົນທີ່ລັກລອບປູກຢູ່ເມືອງນາແລ ແຂວງ ຫຼວງນໍ້າທາ 1.5 ເຮັກຕາ</u>: **ຂ່າວໂດຍ ອິດສະຫຼະ**

<u>ພື້ນທີ່ປູກຝັງ ມ.ປາກຊ່ອງ ໜ້ອຍລົງ</u>: **ຂ່າວໂດຍ ວິທະຍຸ ເອເຊຍເສຣີ**

---


**Contact us/ຕິດຕໍ່ພວກເຮົາໄດ້ທີ່:**

**Email/ອີເມລ:** Info@laolandinfo.org

**Follow us/ຕິດຕາມພວກເຮົາໄດ້ທີ່:**

Land Information Working Group

www.laolandinfo.org